## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 29 ເມສາ 2007 (4-29-2007)

---

# ຕັ້ງໝັ້ນຄົງໃນຄວາມເຊື່ອ

**ຂໍ້ພຣະຄັມພີໃນບົດຮຽນ:** ໂຢຮັນ 15:18-16:4

**ຄຳຖາມແຫ່ງຊີວິດ:** ຄຣິສຕຽນຈະເຮັດຢ່າງໃດຕໍ່ຄົນທີ່ກຽດຊັງເຮົາ?

**ພຣະຄັມພີແຫ່ງຄວາມຈິງ:** ຄຣິສຕຽນຕ້ອງເຂົ້າໃຈວ່າໂລກນີ້ຈະໄດ້ກຽດຊັງພວກເຮົາ, ແຕ່ໃຫ້ສືບຕໍ່ເປັນພະຍານເຣື່ອງພຣະເຢຊູໃນເວລາຖືກຂົ່ມເຫງ, ແລະໃຫ້ຕັ້ງໝັ້ນຄົງຢູ່ໃນຄວາມເຊື່ອ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ຂຽນຂຶ້ນມາເພື່ອທ່ານຈະຊ່ອຍທ່ານໃຫ້ຄົ້ນພົບສິ່ງທີ່ພຣະເຢຊູຕ້ອງການຈາກພວກເຮົາໂດຍ:

- ໃຫ້ຮຽນຮູ້ວ່າຜູ້ທີ່ຕິດຕາມອົງພຣະເຢຊູໄປຈະໄດ້ຖືກຂົ່ມເຫງໃນໂລກ ແລະ
- ໃຫ້ຕັດສິນໃຈວ່າຈະຕັ້ງໝັ້ນຄົງໃນພຣະເຢຊູ ເຖິງໂລກນີ້ຈະເຮັດໃຫ້ທ່ານຢ່າງໃດກໍຕາມ.

"ຂ້ອຍບໍ່ມັກເຈົ້າ!, ຂ້ອຍຊັງເຈົ້າ." ຄຳເວົ້າອັນນີ້ເຮັດໃຫ້ມີບັນຫາໃນເມື່ອມັນອອກຈາກປາກຄົນນຶ່ງໄປຫາອີກຜູ້ນຶ່ງ. ບາງທີຜູ້ຮັບການປະຕິເສດນັ້ນອາດມີຄວາມນ້ອຍເນື້ອຕໍ່າໃຈ ສົງສັຍຕົນເອງວ່າເປັນຄົນມີຄ່າຫລືບໍ່. ຖ້າວ່າຄົນເຮົາບໍ່ຮູ້ຈັກຕົນເອງດີ ກໍຈະເຊື່ອຄຳເວົ້າທີ່ເປັນທາງລົບນັ້ນ ວ່າຕົນເອງບໍ່ມີປໂຍດ ຫລືຄຸນຄ່າອັນໃດໆທັງສິ້ນ. ມັກຈະໃຫ້ຜູ້ອື່ນບອກວ່າຕົນເອງເປັນຄົນຊະນິດໃດ. ແຕ່ໃນເຣື່ອງຈິດວິນຍານແລ້ວ, ການຖືກປະຕິເສດເພາະເຮົາມີຄວາມສຳພັນກັບພຣະຄຣິດ ແມ່ນໃຫ້ຮູ້ວ່າພວກເຂົາໄດ້ຊັງເຮົາແທ້.

ຄວາມຈິງມີຢູ່ວ່າ ໃນສັຕະວັດທີ 20 ນີ້ ຄຣິສຕຽນຫລາຍໆຄົນໄດ້ຖືກຂ້າຕາຍເພາະຍ້ອນຄວາມເຊື່ອຂອງພວກເຂົາໃນພຣະເຢຊູ ຫລາຍກວ່າສັຕະວັດອື່ນໆທີ່ຜ່ານໄປ. ໃນສັດຕະວັດທີ 21 ນີ້ ຄຣິສຕຽນກໍຍັງໄດ້ຮັບການຂົ່ມເຫັງສືບຕໍ່ມາບໍ່ຂາດທຸກວັນ. ພຣະຄຣິດກໍຮູ້ແລ້ວວ່າ ໂລກນີ້ຈະກຽດຊັງຄຣິສຕຽນເພີ້ມຂຶ້ນ ແລະພຣະອົງໄດ້ສັ່ງສອນໃຫ້ຄຣິສຕຽນຮຽນຮູ້ວິທີຕອບຕໍ່ຄວາມກຽດຊັງຂອງໂລກ. ໃນບົດຮຽນນີ້ຈະຊ່ອຍໃຫ້ທ່ານມີກຳລັງ ແລະຕັດສິນໃຈຢ່າງເດັດຂາດວ່າ ທ່ານຈະຕັ້ງໝັ້ນຄົງໃນຄວາມເຊື່ອຕໍ່ພຣະຄຣິດ ເຖິງຈະມີການຂົ່ມເຫັງເກີດຂຶ້ນຫລາຍເທົ່າໃດກໍຕາມ.

## ສຶກສາພຣະຄັມພີ

### 1. ຖືກກຽດຊັງດ້ວຍໂລກ (ໂຢຮັນ 15:18-25)

ໃນສັງຄົມຕ່າງໆເຮົາຄຶດວ່າຖ້າມີການເຮັດສິ່ງທີ່ດີແລ້ວ ພວກເຂົາກໍຍອມຮັບເອົາພວກເຮົາ. ອົງພຣະເຢຊູກ່າວວ່ານັ້ນບໍ່ແມ່ນຄວາມຈິງ ໃນຖານທີ່ພວກເຮົາເປັນສາວົກຂອງພຣະອົງ. ພຣະອົງບອກພວກສາວົກວ່າ ຢ່າແປກໃຈ **ຖ້າວ່າໂລກນີ້ໄດ້ກຽດຊັງທ່ານ**. ໃນພຣະຄັມພີໃໝ່ ຄຳເວົ້າວ່າ **ໂລກ** ແມ່ນຄົນທີ່ບໍ່ຮູ້ຈັກພຣະອົງ, ແມ່ນຜູ້ທີ່ມີຣະບົບການວ່າອັນໃດມີຄ່າຕາມກົດເກນຄວາມເຂົ້າໃຈຂອງເຂົາ ວ່າຈະຮັບຮູ້ພຣະເຈົ້າຫລືຮັບເອົາຄຳສອນຂອງພຣະອົງ.

ຄຳເວົ້າ **ຖ້າວ່າ** ມີຄວາມໝາຍຢ່າງໃດ? ຄຳເວົ້າທີ່ໃຊ້ໃນທຸກມື້ນີ້ແມ່ນເວົ້າເຖິງສິ່ງທີ່ບໍ່ແນ່ນອນ. ບາງເທື່ອພາສາ

ກຣີກແປຄຳເວົ້ານີ້ວ່າ **ຫລັງຈາກ.** ຕອນນີ້ພຣະເຢຊູໄດ້ໃຊ້ຄຳເວົ້າ **ຫລັງຈາກ.** ໃນຍຸກໃໝ່ ພວກສາວົກຕ້ອງ**ເຂົ້າໃຈ**ອັນນີ້. ຜູ້ທີ່ເຊື່ອ, ຜູ້ຖວາຍຕົວເອງຈະຢູ່ເພື່ອພຣະເຢຊູ ຍອມຮັບປະສົບກັບຄວາມທໍຣະມານຍ້ອນຄວາມເຊື່ອ. ຄົນທີ່ເຊື່ອໃນປະວັດສາດໄດ້ຮັບປະສົບມາຢ່າງນີ້ມາຕລອດ. ພວກເຖົ້າແກ່ບູຮານໄດ້ຮັບການຂົ່ມເຫັງມາກ່ອນແລ້ວ, ການທີ່ຕິດຕາມຕົວຢ່າງຂອງພຣະອາຈານຜູ້ທີ່ໄດ້ກ່າວວ່າ **ໂລກໄດ້ກຽດຊັງເຮົາກ່ອນເຂົາໄດ້ຊັງພວກທ່ານ**.

ການທີ່ຈະມີຄວາມເຊື່ອອັນໝັ້ນຄົງຖ້າມກາງການຂົ່ມເຫງນັ້ນ ພວກເຮົາຕ້ອງເຂົ້າໃຈສະພາບການບາງຢ່າງເຊັ່ນ: ເຂົາຊັງທ່ານບໍ່ແມ່ນທ່ານເອງ ແຕ່ແມ່ນພຣະເຢຊູ. ຢ່າເກັບສິ່ງນີ້ໄວ້ເປັນສ່ວນຕົວ, ຄວາມຈິງແທ້ແມ່ນ **ພວກເຂົາໄດ້ເຮັດສິ່ງເຫລົ່ານີ້ຕໍ່ທ່ານເພາະໃນນາມຂອງພຣະຄຣິດ.**

ຈົ່ງສະບາຍໃຈເຫັ້ນການພົວພັນຂອງທ່ານຕໍ່ພຣະຄຣິດເປັນເຫດໃຫ້ໂລກນີ້ໄດ້ກາຍເປັນສັດຕຣູຂອງທ່ານ. ໃຫ້ທ່ານຈ້ອງຕາເບິ່ງຄຸນຄ່າອັນມະຫາສານທີ່ທ່ານມີໂອກາດໄດ້ສາມັກຄີທັມກັບພຣະຄຣິດ, ບໍ່ແມ່ນເບິ່ງສິ່ງທີ່ເຮັດໃຫ້ທ່ານໄດ້ຮັບຄວາມທຸກທໍຣະມານໃນໂລກ. ໃຫ້ຈື່ຈຳໄວ້ວ່າທ່ານບໍ່ໄດ້ມີຄວາມລຳບາກໂດຍທີ່ວ່າຜູ້ທີ່ເຊື່ອອື່ນບໍ່ໄດ້ປະສົບມາເລີຍ.

ກ່ອນໜ້ານີ້ພຣະເຢຊູໄດ້ເຕືອນແລ້ວວ່າໃຫ້ພວກເຂົາຮັກແພງຊຶ່ງກັນແລະກັນ ເພາະໂລກນີ້ຈະກຽດຊັງ. ພວກສາວົກໄດ້ຍອມຕ້ອນຮັບກັນເພາະພວກເຂົາມີຄວາມນຶກຄຶດຢ່າງດຽວກັນ ແຕ່ພວກເຂົາຈະບໍ່ໄດ້ຮັບຈາກໂລກນີ້. ດັ່ງນັ້ນ, ພຣະເຢຊູຈຶ່ງບອກພວກສາວົກວ່າ **ຖ້າທ່ານເປັນຂອງໂລກ, ໂລກກໍຈະຮັກສິ່ງທີ່ເປັນຂອງມັນ.** ພຣະຄຣິດໄດ້ເລືອກເອົາຜູ້ທີ່ຕິດຕາມພຣະອົງ, ເຫດສັນນັ້ນ ໂລກຈຶ່ງປະຕິດເສດພວກເຂົາ.

ບໍ່ມີອັນໃດຂາດໄປໃນບຸກຄະລິກຂອງພຣະເຢຊູທີ່ເຮັດໃຫ້ໂລກປະຕິດເສດພຣະອົງ. ໂລກໄດ້ກຽດຊັງພຣະອົງຢ່າງບໍ່ມີເຫດຜົນອັນໃດເລີຍ ເພາະພວກເຂົາບໍ່ຮູ້ຈັກຜູ້ສົ່ງພຣະເຢຊູລົງມາ. ໂລກຈະບໍ່ຮ່ວມມືກັບຜູ້ຮູ້ພຣະເຈົ້າໂດຍຜ່ານທາງພຣະເຢຊູ. ການທີ່ຮູ້ຈັກພຣະເຢຊູຄືໃຫ້ຮັກພຣະອົງ. ສ່ວນຜູ້ບໍ່ຮູ້ຈັກພຣະອົງກໍບໍ່ໄດ້ຮັກພຣະອົງເລີຍ.

ເປັນຫຍັງໂລກນີ້ຈຶ່ງກຽດຊັງອົງພຣະເຢຊູ? ເພາະພຣະອົງໄດ້ເປີດເຜີຍຄວາມຜິດບາບຂອງພວກເຂົາ. ຍ້ອນພຣະອົງໂລກຈຶ່ງບໍ່ມີຂໍ້ແກ້ຕົວຕໍ່ຄວາມຜິດຂອງເຂົາ. ພາຣະກິດຂອງພຣະເຢຊູຄື, ຄວາມສຸພາບອ່ອນຫວານ, ແລະຄວາມຮັກ. ໂລກໄດ້ເຫັນແລະໄດ້ຊັງພຣະເຢຊູກ່ອນແລ້ວ ສິ່ງນັ້ນໄດ້ບອກວ່າເຂົາໄດ້ກຽດຊັງພຣະເຈົ້າເໝືອນກັນ.

## ໒. <u>ບອກເຣື່ອງພຣະເຢຊູ</u> (ໂຢຮັນ 15:26-27)

ຄຳເວົ້າຂອງພຣະເຢຊູເຖິງເຣື່ອງການຂົ່ມເຫັງອາດເປັນຜົນສະທ້ອນງ່າຍໆກັບສິ່ງທີ່ພຣະອົງບໍ່ຢາກໃຫ້ເກີດຂຶ້ນເລີຍ. ຕາມທັມະດາໃນເມື່ອມະນຸດຖືກໂຈມຕີ ເຂົາກໍຕອບໂຕ້ຄືນ. ການທີ່ຈະເບິ່ງແຕ່ພາຍໃນກຸ່ມຕົນເອງ ແມ່ນສິ່ງກົງກັນຂ້າມກັບແຜນການຂອງພຣະຄຣິດຕໍ່ຄຣິສຕະຈັກ. ການກຽດຊັງຈາກໂລກນີ້ບໍ່ໄດ້ປ່ຽນແປງເປົ້າໝາຍການຮັບໃຊ້ຂອງຜູ້ທີ່ເຊື່ອ.

**ຜູ້ເລົ້າໂລມ** ແປຈາກຄຳເວົ້າສອງຄຳໃນພາສາກຣີກວ່າ, "ຜູ້ຖືກເອີ້ນໃຫ້ມາຊ່ອຍຄຽງຂ້າງ." ຄຳເວົ້ານີ້ໝາຍເຖິງຜູ້ຕໍ່ວ່າແທນ, ພວກນັກປາດບາງຄົນໄດ້ໃຊ້ຄຳນີ້ໃນທາງກົດໝາຍຫລືທະນາຍຄວາມ. ອົງພຣະເຢຊູໄດ້ບອກພວກສາວົກວ່າການທີ່ພຣະອົງຈາກພວກເຂົາໄປນັ້ນບໍ່ແມ່ນປະພວກເຂົາໄວ້ຄົນດຽວ ໃຫ້ເຮັດຄົນດຽວ. **ວິນຍານແຫ່ງຄວາມຈິງ**ແມ່ນອົງພຣະວິນຍານບໍຣິສຸດ. ຈຸດປະສົງທີ່ພຣະບິດາສົ່ງພຣະວິນຍານລົງມາເພື່ອພຣະອົງຈະໄດ້ເປັນ**ພະຍານ**ເຣື່ອງພຣະເຢຊູເຈົ້າ. ໜ້າທີ່ຂອງອົງພຣະວິນຍານຄືບອກຄົນໃຫ້ມາຫາພຣະເຢຊູ. ບົດສອບທີ່ວ່າເຮົາໄດ້ຮ່ວມມືກັບພຣະວິນຍານຄືໃຫ້ເຮົາເປັນພະຍານເຣື່ອງພຣະຄຣິດເຈົ້າ. (ກິຈການ 1:8).

ການເປັນພະຍານເຣື່ອງພຣະເຢຊູເປັນສິ່ງທີ່ເຮັດໃຫ້ມີການຂົ່ມເຫງເກີດຂຶ້ນໃນໂລກນີ້. ໃນປະເທດນີ້ ພວກເຮົາຍອມຕ້ອນຮັບເອົາທຸກໆສາສນາ ຖ້າວ່າສາສນານຶ່ງສາສນາໃດບໍ່ອ້າງຕົນເອງວ່າເປັນສາສນາຖືກກວ່າໝູ່ ທີ່ເຫັນຕົວຢ່າງໄດ້ (ໂຢຮັນ 14:6). ການເປັນພະຍານຂອງຜູ້ທີ່ເຊື່ອນັ້ນມີພະລັງຂຶ້ນເພາະໄດ້ເວົ້າເຖິງຄວາມພົ້ນທີ່ຫາບໍ່ໄດ້ໃນຜູ້ອື່ນ. ພວກເຮົາໄດ້ບອກຜູ້ອື່ນເຣື່ອງພຣະຄຣິດເພາະວ່າພຣະອົງເປັນຫົນທາງດຽວໄປເຖິງຄວາມລອດພົ້ນໄດ້. ຍິ່ງໄປກວ່ານັ້ນພວກເຮົາໄດ້ເຊື່ອຟັງໃນການເປັນພະຍານເຣື່ອງພຣະຄຣິດ, ພວກເຮົາອາດເຮັດໃຫ້ໂລກຄຽດຮ້າຍຫລາຍຂຶ້ນກໍໄດ້.

ຄຳກິຣິຍາ ໃນຂໍ້ 27 ໄດ້ບອກເຖິງການປະຕິບັດ. ແນວໃດຕໍ່ຕາມອົງພຣະເຢຊູເອີ້ນພວກສາວົກໃຫ້ເປັນພະຍານ ຫລືບອກຄົນອື່ນໆເຖິງ**ພຣະອົງ ເພາະວ່າ**ພວກເຂົາໄດ້**ຢູ່ກັບເຮົາຕັ້ງແຕ່ເລີ້ມຕົ້ນ**. ພວກສາວົກໄດ້ມີປະສົບການກັບພຣະອົງ, ເຫັນຄວາມເມດຕາ ຄວາມຮັກ, ຄຳສັ່ງສອນ, ແລະຮູ້ວ່າພຣະອົງເປັນຜູ້ບໍຣິສຸດຂອງພຣະເຈົ້າ. ພຣະອົງໄດ້ປ່ຽນແປງ ຊີວິດຂອງພວກເຂົາຕລອດມາ. ດັ່ງນັ້ນ, ເຮັດແນວໃດຈະໃຫ້ພວກສາວົກຢຸດຢັ້ງເຖິງການເປັນພະຍານເຣື່ອງຂອງອົງພຣະເຢຊູໄດ້? ເປັນຄວາມຈິງເໝືອນກັນຕໍ່ຜູ້ທີ່ເຊື່ອໃນທຸກມື້ນີ້. ບໍ່ເຮົາບໍ່ມີຂໍ້ແກ້ຕົວທີ່ຈະບໍ່ປະກາດເພາະເຮົາບໍ່ໄດ້ຢູ່ກັບພຣະເຢຊູເວລາພຣະອົງມີຊີວິດຢູ່ໃນໂລກນີ້. ອົງພຣະວິນຍານບໍຣິສຸດເປັນຜູ້ແທນພຣະຄຣິດຫລັງຈາກພຣະເຢຊູສະເດັດກັບຄືນສູ່ສວັນ (ໂຢຮັນ 16:5-7) ປະສົບການຂອງພວກເຮົາກັບພຣະຄຣິດເຖິງແມ່ນວ່າບໍ່ໄດ້ເຫັນກັບຕາກໍຕາມ ແຕ່ອົງພຣະວິນຍານເຮັດໃຫ້ເຮົາມີຄວາມຮູ້ສຶກເປັນຈິງວ່າພຣະຄຣິດໄດ້ຢູ່ກັບເຮົາແທ້. ພວກເຮົາຕ້ອງສະແດງຄວາມເຊື່ອໝັ້ນຄົງຕໍ່ພຣະເຈົ້າໃນການເປັນພະຍານເພື່ອພຣະຄຣິດ.

**3. <u>ຖືກຂ້າຕາຍເພື່ອພຣະເຈົ້າ</u>** (ໂຢຮັນ 16:1-4)

ໃນໂລກນີ້ເຕັມໄປດ້ວຍຄຳເຕືອນຕ່າງໆ. ຕາມຕລາດຮ້ານຄ້າ ພວກພໍ່ຄ້າໄດ້ຕົວະຂຽນໃບເຕືອນໃສ່ສິນຄ້າຂອງພວກເຂົາ. ພວກເຂົາເອົາໃສ່ບ່ອນຄົນບໍ່ອ່ານ ຫລື ເອົາຕົວໜັງສືນ້ອຍຂຽນຈົນຄົນອ່ານຍາກ. ພໍ່ຄ້າຫວັງວ່າລູກຄ້າຈະບໍ່ເຊົາຊື້ສິ່ງຂອງເພາະມີໃບເຕືອນຂຽນໄວ້. ວິທີການຂອງພຣະເຢຊູນັ້ນກົງກັນຂ້າມກັບພວກພໍ່ຄ້າ. ພຣະອົງໄດ້ບອກພວກສາວົກ ຫລືຜູ້ຄິດຈະເປັນສາວົກຢ່າງແຈ່ມແຈ້ງວ່າ ການທີ່ເປັນສາວົກຂອງພຣະເຢຊູນັ້ນມີຫຍັງແດ່ທີ່ຕ້ອງເຮັດ.

ຈຸດປະສົງຂອງພຣະເຢຊູຄື ບໍ່ໃຫ້ພວກສາວົກ**ເຕະສະດຸດລົ້ມລົງ**. ພຣະອົງບໍ່ຢາກໃຫ້ພວກສາວົກຮູ້ນຳຫລັງວ່າຫລັງຈາກເປັນສາວົກແລ້ວຈະມີການຂົ່ມເຫງເກີດຂຶ້ນ-ພຣະອົງບອກໄວ້ກ່ອນລ່ວງໜ້າຢ່າງແຈ່ມແຈ້ງ. ຂັ້ນທີນຶ່ງພວກສາວົກຈະຖືກຫ້າມບໍ່ໃຫ້ເຂົ້າໄປໃນ**ທັມມະສາລາ.** ຈຳໄວ້ວ່າສາວົກພວກທຳອິດແມ່ນພວກຢິວ ພວກນີ້ເຂົາສືບຕໍ່ນະມັສການພຣະເຈົ້າຕາມພຣະວິຫານຕ່າງໆ. (ກິຈການ 2:46). ການທີ່ຫ້າມບໍ່ໃຫ້ເຂົ້າໄປນະມັສການຕາມພຣະວິຫານນີ້ແມ່ນການສູນເສັຽອັນໃຫຍ່ສຳລັບພວກເຂົາ. ພຣະເຢຊູໄດ້ບອກເຂົາວ່າ ພວກເຂົາຈະຖືກປະຕິເສດຫລາຍກວ່ານັ້ນ. ພຣະເຢຊູທຳນວຍວ່າ ເວລານຶ່ງຄົນຈະຂ້າພວກເຂົາ ແລະຄົນເຫລົ່ານັ້ນຈະຖືວ່າເປັນການ**ຮັບໃຊ້ພຣະເຈົ້າ**.

ໃນປະເທດອະເມຣິກາ ຍັງບໍ່ມີການຂົ່ມເຫັງຜູ້ທີ່ຮັບເອົາອົງພຣະເຢຊູເທື່ອ. ບໍ່ເປັນເຣື່ອງໜ້າຄິດເລີຍວ່າໃນປະເທດນີ້ຈະມີການຂົ່ມເຫງເກີດຂຶ້ນ ແຕ່ມັນອາດເປັນໄປໄດ້. ການຖືກຂ້າຕາຍໄດ້ເກີດຂຶ້ນເພາະເຂົາໄດ້ເຊື່ອໃນອົງພຣະເຢຊູໄດ້ມີມາແລ້ວໃນປະເທດຕ່າງໆ. ການທີ່ຕັ້ງໝັ້ນຄົງຕໍ່ພຣະຄຣິດໄດ້ທ້າທາຍຕໍ່ການໂຄຣົບຕໍ່ທຳນຽມຂອງສັງຄົມ. ການທຳນວາຍວ່າຈະມີການຂົ່ມເຫງເກີດຂຶ້ນໄດ້ສຳເຣັດໃນສັຕະວັດທີນຶ່ງ (ກິຈການ 6:11-8:3). ມັນອາດມີການຂົ່ມເຫັງເກີດຂຶ້ນຕໍ່ຜູ້ທີ່ເຊື່ອແທ້ ແລະຜູ້ທີ່ຢາກຕິດຕາມພຣະເຢຊູໄປ.

ຄວາມຮູ້ສຶກຊຶ່ງບັງເກີດໃນໃຈໄດ້ຖືວ່າ "ຜູ້ມີພະລັງເຮັດສິ່ງຖືກຕ້ອງ." ຊຶ່ງກ່າວໄປອີກວ່າ ເຫດທີ່ເຮັດໃຫ້ເຄືອນຍ້າຍແມ່ນສິ່ງຖືກຕ້ອງແລະຄວາມຈິງຊຶ່ງນຳໄປສູ່ຄວາມສຳເຣັດ. ແຕ່ວ່າໃນປະວັດສາດແລະພຣະນິດມິດໄດ້ບອກເຖິງຄວາມຜິດພາດ. ພຣະເຢຊູເປັນຫ່ວງວ່າພວກສາວົກຈະມີຄຳຖາມຂຶ້ນມາໃນເວລາເຂົາໄດ້ພົບກັບການຂົ່ມເຫັງ. ພຣະເຢຊູຕ້ອງການໃຫ້ເຂົາຮູ້ວ່າການຂົ່ມເຫັງຕ້ອງເກີດຂຶ້ນບໍ່ແມ່ນວ່າເຫດຜົນຂອງພວກເຂົາບໍ່ຖືກຕ້ອງ ແຕ່ແມ່ນໂລກນີ້ບໍ່ໄດ້ຮູ້ຈັກພຣະເຈົ້າຫລືອົງພຣະເຢຊູ.

ໃນເບື້ອງຕົ້ນຂອງປະວັດສາດ, ບໍ່ຈຳເປັນທີ່ພຣະເຢຊູຈະເຕືອນພວກສາວົກວ່າການຂົ່ມເຫັງຕ້ອງເກີດຂຶ້ນໂດຍບໍ່ມີທາງເລືອກເພາະຕອນນັ້ນພຣະເຢຊູຢູ່ກັບພວກເຂົາ. ກ່ອນອື່ນໝົດ, ການຂົ່ມເຫັງໄດ້ເກີດຂຶ້ນຕໍ່ພຣະເຢຊູໂດຍກົງ, ບໍ່ແມ່ນພວກສາວົກ. ສອງ, ການຢູ່ນຳທາງດ້ານຮ່າງກາຍເປັນການພຽງພໍທີ່ຈະໃຫ້ມີກຳລັງໃຈຕໍ່ສູ້ກັບບັນຫາ. ຢ່າງໃດກໍຕາມຕອນໃກ້ອົງພຣະເຢຊູຈະຖືກປະຫານຊີວິດ ພຣະອົງໄດ້ກະກຽມພວກສາວົກເພື່ອພວກເຂົາຈະປະສົບກັບສິ່ງທີ່ຈະຕາມມາ. ຜູ້ທີ່ເຊື່ອໃນວັນນີ້ຄວນຈະຕຽມຕົວເພື່ອຈະພົບກັບການຕໍ່ຕ້ານຂອງໂລກນີ້. ຄຳເຕືອນນີ້ບໍ່ແມ່ນສຳລັບຄົນໃນສັຕະວັດທີ່ນຶ່ງເທົ່ານັ້ນ ແຕ່ຕໍ່ທຸກຄົນທີ່ມີຄວາມເຊື່ອແລະຕິດຕາມພຣະອົງໄປໃນວັນນີ້ເຊັ່ນດຽວກັນ.

## ບົດຮຽນຊີວິດ

ຄວາມສັດຊື່ແລະຄວາມໝັ້ນຄົງມີລັກສະນະຢ່າງໃດຕໍ່ຄົນໃນສັດຕະວັດທີນຶ່ງ ແລະຕໍ່ຄົນໃນສັດຕະວັດນີ້?

- ຄົນທີ່ເຊື່ອໄດ້ຮັບຄຳຕອບສນອງຈາກໂລກ ເໝືອນອົງພຣະເຢຊູໄດ້ຮັບ.
- ຄົນທີ່ເຊື່ອຄວນເປັນພະຍານເພື່ອພຣະຄຣິດ, ຮ່ວມງານກັບພຣະວິນຍານບໍຣິສຸດ.
- ຄົນທີ່ເຊື່ອປະສົບກັບຄວາມກຽດຊັງແລະຂົ່ມເຫັງ ແຕ່ບໍ່ໄດ້ຕົກໄປຈາກຄວາມເຊື່ອ

ພຣະເຢຊູເຕືອນພວກຄົນທີ່ເຊື່ອໃຫ້ຕຽມຕົວສເມີ. ທ່ານຈະຕຽມຕົວຢ່າງໃດໃນອາທິດນີ້? ໃນຄວາມຄິດແລ້ວໃຫ້ຮັບເອົາຄຳເຕືອນຂອງພຣະຄຣິດ. ຈິດວິນຍານ, ໃຫ້ຢູ່ໃກ້ຊິດພຣະອົງເພາະໃນພຣະພັກຂອງພຣະອົງເປັນສິ່ງຕໍ່ສູ້ກັບການຂົ່ມເຫັງໄດ້. ຕາມຄວາມຮູ້ສຶກ ໃຫ້ຖືວ່າໂລກໄດ້ປະຕິເສດຍ້ອນຄວາມເຊື່ອຂອງເຮົາໃນພຣະຄຣິດ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org.,by BV.